# ຄວາມສິ້ງສານອັນອິດເມື່ອຍ

( ອ່ານພຣະທັມ ຄາລາເຕັຽ 6:7-10 )

---

"ຢ່າໃຫ້ພວກເຮົາເມື່ອຍລ້າໃນການເຮັດດີ ເພາະວ່າຖ້າໃຈພວກເຮົາບໍ່ທໍ້ຖອຍ ເຮົາກໍຈະໄດ້ເກັບກ່ຽວຜົນຕາມເວລາອັນສົມຄວນ" ( ຄາລາເຕັຽ 6:9 )

---

ເມື່ອທ່ານອ່ານໜັງສືພິມໃນຕອນເຊົ້າ ແລ້ວເບິ່ງຂ່າວທາງທີວີ ໃນຕອນແລງ. ທ່ານອາດຈະມີໂອກາດໄດ້ເຫັນ ວ່າມີອົບພະຍົບຢູ່ໃນໂລກນີ້ເປັນຈຳນວນຫຼາຍລ້ານຄົນ ເຂົາເຈົ້າເຫຼົ່ານັ້ນໄດ້ໂຕນໜີຈາກການຖືກກົດຂີ່ຂົ່ມເຫັງຫຼືຄວາມໂຫດຮ້າຍທາລຸນ. ບັນຫາຂອງໂລກເຮົາເບິ່ງຄືວ່າມັບມື້ນັບເພີ້ມທະວີຫຼາຍຂຶ້ນ ການແກ້ໄຂບັນຫາກໍບໍ່ທົບບໍ່ທັນ ໂດຍສະເພາະແມ່ນຜູ້ທີ່ໃຫ້ຄວາມຊ່ອຍເຫຼືອຢູ່ແຖວໜ້າ. ສຳລັບພວກເຮົາຊຶ່ງເປັນຜູ້ສັງເກດການຢູ່ໄກ ກໍພອຍໄດ້ຮັບຄວາມຍາກລຳບາກໄປຕາມໆ ກັນ ຈົນຕ້ອງເອີ້ນສະຖານພະການດັ່ງກ່າວນີ້ວ່າ "ຄວາມສິ້ງສານອັນອິດເມື່ອຍ"

ເມື່ອເຫື່ອເຮົາໄຫຼຊຶມອອກ ມັນກໍເປັນການງ່າຍ ພຽງແຕ່ເອົາຜ້າເຊັດໂຕມາເຊັດແລ້ວມັນກໍແຫ້ງໄປ. ແຕ່ຖ້າຫາກຄົນອື່ນມີຄວາມຈຳເປັນຂາດເຂີນໂດຍທີ່ບໍ່ຮູ້ຈັກສິ້ນສຸດ ຄວາມພະຍາຍາມຊ່ອຍເຫຼືອຂອງພວກເຮົາກໍບໍ່ແຕກຕ່າງກັນກັບ "ນ້ຳຢົດນຶ່ງໃນຄຸ" ພວກເຮົາອາດຈະຈົ່ມວ່າ "ເຮົາໄດ້ປໂຍດອີສັງ....ເຊົາສາດີກວ່າ"

ຄວາມສິ້ງສານອັນອິດເມື່ອຍອາດຈະເປັນເໝືອນຢາພິດຕໍ່ກິຣິຍາທ່າທີ ຫຼືນິສັຍຂອງເຮົາ ໃນຍາມເຮົາຕົກຢູ່ໃນສະຖານະການອັນຍາກລຳບາກ ບໍ່ວ່າຈະຢູ່ເຮືອນ, ບ່ອນເຮັດວຽກ, ຢູ່ໃນຄຣິສຕະຈັກ, ຢູ່ໂຮງຮຽນ. ຂໍ້ພຣະຄັມພີທີ່ແກ້ຢາພິດດັ່ງກ່າວນີ້ ໄດ້ກ່າວໄວ້ໃນພຣະທັມ ຄາລາເຕັຽ 6:9-10 ຊຶ່ງກ່າວໄວ້ວ່າ "ຢ່າໃຫ້ພວກເຮົາເມື່ອຍລ້າໃນການເຮັດດີ ເພາະວ່າຖ້າໃຈພວກເຮົາບໍ່ທໍ້ຖອຍ ເຮົາກໍຈະໄດ້ເກັບກ່ຽວຜົນຕາມເວລາອັນສົມຄວນ ເຫດສັນນັ້ນຕາມທີ່ມີໂອກາດ ໃຫ້ພວກເຮົາເຮັດການດີຕໍ່ຄົນທັງປວງ ແລະເປັນຕົ້ນວ່າຕໍ່ຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອ"

ໃນມື້ນີ້ ຖ້າຫາກທ່ານປະເຊີນກັບສະພາບການທີ່ຂ້ອນຂ້າງຈະຜິດຫວັງ ທ່ານຢ່າທໍ້ຖອຍ ລົ້ມເລີກເຫື່ອ. ພຣະເຈົ້າຊົງສັນຍາວ່າ ເມັດພືດດີທີ່ທ່ານໄດ້ຫວ່ານ ແລະຄວາມດີທີ່ທ່ານໄດ້ກະທຳ ຈະເກີດຜົນໃນເວລາອັນສົມຄວນ ( ໃນເວລາຂອງພຣະເຈົ້າ ) ໂດຍຄວາມເຊື່ອຂອງທ່ານ...ຂໍໃຫ້ທ່ານຈົ່ງກະທຳດີຕໍ່ໄປເທີ້ນ.....

---

ຄວາມສັດຊື່ເປັນສິ່ງພຣະເຈົ້າພໍພຣະທັຍ ການເກີດຜົນແມ່ນລາງວັນຈາກພຣະອົງ.

---

ຮຽບຮຽງຈາກ ອາວເດລີເບຣດ

